ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງອຸດສາຫະກຳ ແລະ ການຄ້າ**
ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດ COVID-19

ເລກທີ 0437 /ອຄ.ກຄພນ
ນະຄອນຫຼວງວຽງຈັນ, ວັນທີ 03 ພຶດສະພາ 2020

## ຄຳແນະນຳ

**ສຳລັບຕະຫຼາດສົດ, ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານສະດວກຊື້ (ໄຮເປີມາເກັດ, ຊຸບເປີເຊັນເຕີ, ຊຸບເປີມາເກັດ, ມິນິມາດ), ຮ້ານຄ້າຂາຍຍົກ-ຂາຍຍ່ອຍ, ຕົວແທນຈຳໜ່າຍ ແລະ ຮ້ານສ້ອມແປງລົດຍົນ ແລະ ລົດຈັກ (ຕາມລະຫັດ LSIC ພາກສ່ວນ 45-47) ໃນການປ້ອງກັນ, ຄວບຄຸມ ແລະແກ້ໄຂການລະບາດຂອງພະຍາດ COVID-19.**

- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກ ສາຍພັນໃໝ່ ເລກທີ 09/ນຍ, ລົງວັນທີ 03 ກຸມພາ 2020.
- ອີງຕາມຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ການແຜ່ລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19, ເລກທີ 06/ນຍ ລົງວັນທີ 29 ມີນາ 2020.
- ອີງຕາມ ແຈ້ງການສະບັບເລກທີ 524/ຫສນຍ, ລົງວັນທີ 1 ພຶດສະພາ 2020 ວ່າດ້ວຍການສືບຕໍ່ປະຕິບັດ ມາດຕະການໃນການປ້ອງກັນ ຄວບຄຸມສະກັດກັ້ນ ແລະ ແກ້ໄຂ ການລະບາດຂອງພະຍາດ ໂຄວິດ 19 ໃນໄລຍະແຕ່ວັນທີ 4 ຫາ 17 ພຶດສະພາ 2020.

ເພື່ອປະຕິບັດ ຄຳແນະນຳ ກ່ຽວກັບເງື່ອນໄຂ ແລະມາດຕະການ ສຳລັບພາກທຸລະກິດ ທີ່ສາມາດ ດຳເນີນກິດຈະການໃນໄລຍະທີ່ມີການລະບາດຂອງພະຍາດ COVID-19 ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ ພ້ອມທັງສອດຄ່ອງກັບສະພາບຄວາມເປັນຈິງ ທັງຮັບປະກັນການຈັດຕັ້ງປະຕິບັດມາດຕະການປ້ອງກັນການແຜ່ລະບາດຂອງພະຍາດ COVID-19.

**ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳດັ່ງນີ້:**

1. ອະນຸຍາດໃຫ້ ໃຫ້ເປີດຕະຫຼາດສົດ, ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານສະດວກຊື້ (ໄຮເປີມາເກັດ, ຊຸບເປີເຊັນເຕີ, ຊຸບເປີມາເກັດ, ມິນລິມາກ), ຮ້ານຄ້າຂາຍຍົກ-ຂາຍຍ່ອຍ, ຕົວແທນຈຳໜ່າຍ ແລະ ຮ້ານສ້ອມແປງລົດຍົນ ແລະ ລົດຈັກ (ຕາມລະຫັດ LSIC ພາກສ່ວນ 45-47).

2. ມາດຕະການປ້ອງກັນສະກັດກັ້ນ ແລະ ຄວບຄຸມ ເພື່ອຮັບມືກັບການລະບາດຂອງພະຍາດ COVID-19 ສຳລັບຫົວໜ່ວຍທຸລະກິດ ທີ່ອະນຸຍາດໃຫ້ເປີດ ຕ້ອງປະຕິບັດຕາມເງື່ອນໄຂດັ່ງລຸ່ມນີ້:

**2.1 ສະຖານທີ່ ແລະ ອຸປະກອນ:**

1) ໃຫ້ແຍກປະຕູທາງເຂົ້າ ແລະ ທາງອອກ ຢ່າງຈະແຈ້ງ ແລະ ກໍລະນີສະຖານທີ່ທີ່ມີທາງເຂົ້າ-ອອກ ທາງດຽວ ແມ່ນໃຫ້ແຍກເລນເຂົ້າ-ອອກ ໂດຍນຳໃຊ້ອຸປະກອນທີ່ມີຄວາມສະດວກໃນການສັນຈອນມາຂັ້ນແຍກເລນດັ່ງກ່າວ, ສຳລັບປະຕູທາງເຂົ້າ ຫຼື ເລນເຂົ້າຕ້ອງຈັດໃຫ້ມີການວັດແທກອຸນຫະພູມ ແລະ ມີເຈວລ້າງມື ຫຼື ເຫຼົ້າສຳລັບຂ້າເຊື້ອ ໄວ້ບໍລິການສຳລັບຜູ້ມາໃຊ້ບໍລິການ ແລະ ພະນັກງານ.
2) ຕ້ອງກຳນົດການຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດຂຶ້ນໄປ ຂອງຜູ້ມາໃຊ້ບໍລິການ.
3) ບໍລິເວນໂຕະຈ່າຍເງິນ ຕ້ອງມີເຈວລ້າງມື ຫຼື ເຫຼົ້າສຳລັບຂ້າເຊື້ອ ເພື່ອໃຫ້ບໍລິການພາຍຫຼັງຈ່າຍເງິນແລ້ວ.
4) ອຸປະກອນ ແລະ ເຄື່ອງໃຊ້ທີ່ມີການສຳພັດເລື້ອຍໆ ເຊັ່ນ: ກະຕ່າ ແລະ ລໍ້ຍູ້ເຄື່ອງ, ບ່ອນກົດລິບ, ລະບຽງ ຫຼື ຮາວປະຕູຫ້ອງນ້ຳ, ຫ້ອງນ້ຳ ແລະ ອື່ນໆ ຕ້ອງອະນາໄມ ເຊົ້າ, ສວຍ ແລະ ແລງ ດ້ວຍນ້ຳຢາຂ້າເຊື້ອ ເປັນຕົ້ນ ໂຊດຽມຮາຍໂປກຼໍຣິດ (Sodium Hypochlorite) 0,1%, ໄຮເຕີ ຫຼື ຢາຂ້າເຊື້ອທີ່ໄດ້ມາດຕະຖານ ທີ່ຜູ້ປະກອບການມີ.

**2.2 ສຳລັບຜູ້ປະກອບການ:**

1) ຕ້ອງຈັດໃຫ້ມີການກວດກັ່ນກອງ ແລະ ວັດແທກອຸນຫະພູມພະນັກງານ ກ່ອນເຂົ້າເຮັດວຽກປະຈຳວັນ ຫາກພົບວ່າພະນັກງານຜູ້ໃດມີອຸນຫະພູມສູງກວ່າ 37.5 ອົງສາເຊ ຄວນໃຫ້ພັກຜ່ອນຢູ່ເຮືອນ ແລະ ຫາກມີອາການໄຂ້, ໄອ, ຫາຍໃຈຍາກ ຕ້ອງໃຫ້ໄປກວດຢູ່ໂຮງໝໍທີ່ຖືກກຳນົດເປັນບ່ອນກວດພະຍາດ COVID-19.ບໍ່ອະນຸຍາດໃຫ້ເຂົ້າໃນສະຖານທີ່ ໃຫ້ໂທຫາ 165, 166 ເພື່ອຂໍຄຳປຶກສາ.
2) ຕ້ອງຕິດປ້າຍ ຫຼື ແຈ້ງບອກໃຫ້ຜູ້ມາໃຊ້ບໍລິການໃສ່ຜ້າອັດປາກ-ດັງ ແລະ ວັດແທກອຸນຫະພູມກ່ອນເຂົ້າໃຊ້ບໍລິການໃນຮ້ານ,ຕ້ອງມີສະຖານທີ່ບໍລິການຜ້າອັດປາກ-ດັງໃຫ້ແກ່ຜູ້ມາໃຊ້ບໍລິການໃນກໍລະນີທີ່ບໍ່ໄດ້ກະກຽມມາ.
3) ຕ້ອງໃຫ້ຂໍ້ມູນ, ຄວາມຮູ້, ຄຳແນະນຳ ດ້ວຍການປະຊາສຳພັນ ກ່ຽວກັບການປ້ອງກັນການລະບາດພະຍາດ COVID-19 ໃຫ້ກັບຜູ້ທີ່ເຂົ້າມາໃຊ້ບໍລິການ.
4) ຈັດໃຫ້ມີເຈວລ້າງມື ຫຼື ເຫຼົ້າສຳລັບຂ້າເຊື້ອ ໄວ້ປະຕູທາງເຂົ້າ, ຫ້ອງນ້ຳ, ບໍລິເວນໂຕະຈ່າຍເງິນ ເພື່ອບໍລິການໃຫ້ຜູ້ມາໃຊ້ບໍລິການ ແລະ ພະນັກງານຂອງຮ້ານ.
5) ພະນັກງານທຸກຄົນຕ້ອງສວມໃສ່ຜ້າອັດປາກ-ດັງ, ຖົງມື ຫຼື ອຸປະກອນ ປ້ອງກັນການຕິດເຊື້ອພະຍາດ COVID-19 ໃນການໃຫ້ບໍລິການແກ່ລູກຄ້າ, ລວມທັງໃນເວລາເກັບມ້ຽນເຄື່ອງໃນຮ້ານ ແລະ ອະນາໄມອຸປະກອນ ໂດຍສະເພາະໃນບໍລິເວນທີ່ມີຜູ້ສຳພັດເລື້ອຍ ດ້ວຍນ້ຳຢາຂ້າເຊື້ອ ເຊັ່ນ: ໂຊດຽມຮາຍໂປກຼໍຣິດ (Sodium Hypochlorite) 0,1% ຫຼື ຢາຂ້າເຊື້ອທີ່ໄດ້ມາດຕະຖານອື່ນໆ ທີ່ຜູ້ປະກອບການມີ.
6) ຕ້ອງແຕ່ງຕັ້ງພະນັກງານຮັບຜິດຊອບພົວພັນປະສານງານສະເພາະວຽກປ້ອງກັນ ແລະ ຄວບຄຸມການແຜ່ລະບາດພະຍາດ COVID-19 ພ້ອມດ້ວຍກຳນົດເບີໂທຕິດຕໍ່ ແລ້ວແຈ້ງໃຫ້ບັນດາຫ້າງຮ້ານຕ່າງໆໃນຕະຫຼາດ ຫຼື ສູນການຄ້າ, ຮ້ານສັບພະສິນຄ້າຮັບຊາບ ແລະ ສາມາດພົວພັນປະສານງານໃນກໍລະນີພົບຜູ້ສົງໃສຕິດເຊື້ອພະຍາດ COVID-19.

7) ພະນັກງານທີ່ຮັບຜິດຊອບແຕ່ງຕັ້ງ ຕ້ອງກວດກາຈຳນວນຄົນທີ່ເຂົ້າມາໃຊ້ບໍລິການ ບໍ່ໃຫ້ແອອັດໂດຍການຈຳກັດໄລຍະຫ່າງ 1ແມັດຂຶ້ນໄປ ໃນກໍລະນີ ທີ່ມີຜູ້ເຂົ້າມາໃຊ້ບໍລິການຫຼາຍ ແມ່ນໃຫ້ຈຳກັດ ຈຳນວນຕາມຄວາມເໝາະສົມຂອງຮ້ານຄ້າ.

**2.3 ສຳລັບຜູ້ມາໃຊ້ບໍລິການ:**

1) ທຸກຄົນທີ່ເຂົ້າມາໃຊ້ບໍລິການ ຕ້ອງໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍເຈວລ້າງມື ຫຼື ເຫຼົ້າສຳລັບຂ້າເຊື້ອ ທີ່ຮ້ານກະກຽມໄວ້ ແລະ ໄດ້ຮັບການວັດແທກອຸນຫະພູມ ຖ້າພົບວ່າມີອຸນະພູມສູງກວ່າ 37.5 ອົງສາເຊ ແມ່ນບໍ່ອະນຸຍາດໃຫ້ເຂົ້າໃນຮ້ານ, ໃຫ້ໂທປະສານຫາ 165 ຫຼື 166 ເພື່ອຂໍຄຳປຶກສາ.
2) ຕ້ອງຮັກສາໄລຍະຫ່າງຂອບເຂດລັດສະໝີ ຢ່າງໜ້ອຍ 01 ແມັດ ຂຶ້ນໄປ.
3) ການໄອ-ຈາມ ໃນຮ້ານຄ້າ ຕ້ອງປະຕິບັດຕາມຫຼັກການອະນາໄມ ໂດຍການໄອໃສ່ທົບສອກຂອງແຂນ ຫຼື ໄອໃສ່ເຈັ້ຽທີ່ຊູ ແລ້ວຖິ້ມໃສ່ຖັງຂີ້ເຫຍື້ອທີ່ມີຝາປິດ.
4) ເວລາກັບເຮືອນຕ້ອງໄດ້ປະຕິບັດ ຫຼັກການອະນາໄມ ທີ່ໄດ້ວາງອອກເປັນຕົ້ນ: ລ້າງມືດ້ວຍນ້ຳສະອາດໃສ່ສະບູ ຫຼືເຈວລ້າງມື ປ່ຽນເຄື່ອງ ແລະ ອາບນ້ຳ.

3. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຕາມ ຕາມຄຳແນະນຳສະບັບນີ້ຢ່າງເຂັ້ມງວດ.

ຖ້າຫາກການຈັດຕັ້ງປະຕິບັດພົບບັນຫາ ຫຼື ຂໍ້ຫຍຸ້ງຍາກ ໃຫ້ປະສານຫາຄະນະສະເພາະກິດຂອງແຂວງ, ເມືອງ ຂອງຕົນ ຂໍທິດຊີ້ນຳເພື່ອຄວາມເປັນເອກະພາບ ຫຼືສາມາດສະເໜີຫາ ຄະນະສະເພາະກິດ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຮັບມືການແຜ່ລະບາດ ຂອງພະຍາດ COVID-19. ເລກທີ 0358/ອຄ.ກຈພງ, ລົງວັນທີ 02 ເມສາ 2020.

4. ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ຮອງລັດຖະມົນຕີ**
**ຄະນະສະເພາະກິດ**

ກະຊວງອຸດສາຫະກຳແລະການຄ້າ
ລັດຖະມົນຕີ

ສົມຈິດ ອິນທະມິດ